# ໂຮງຮຽນວັນອາທິດ

**ວັນອາທິດ ທີ 15 ພຶສຈິກາ 2009 (11-15-2009)**

---

## ປະຕິບັດກັບທຸກຄົນຢ່າງສເມີພາບ

**ຂໍ້ພຣະຄັມພີໃນບົດຮຽນ:** ຍາໂກໂບ:2:1-13

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ທ່ານຈະຖືກທ້າທາຍຕໍ່ການປະຕິເສດການລຳອຽງແລະການຕັດສິນລ່ວງໜ້າແລະການປະຕິບັດກັບທຸກຄົນ---ບໍ່ຄຳນຶງເຖິງລັກສະນະການນຸ່ງຖືພາຍນອກຂອງເຂົາຫຼືຖານະຊົນຊັ້ນໃນສັງຄົມ---ດ້ວຍຄວາມສັດຊື່ແລະຄວາມນັບຖື.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ແມ່ນກ່ຽວກັບການເຮັດໃຫ້ມີຄວາມສັມພັນກັນກັບຄົນອື່ນໆໂດຍປາສຈາກການຕັດສິນລ່ວງໜ້າຫຼືມີຄວາມລຳອຽງ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

ຢູ່ໃນສັງຄົມຂອງພວກເຮົາແມ່ນຫຼີງໄຫຼໃຝ່ຝັນຍົກຍ້ອງຊົມເຊີນກັບບັນດາຄົນທີ່ມີຊື່ສຽງຖານະທາງສັງຄົມ ພ້ອມດຽວກັນນັ້ນກໍຫັນມາຕັດສິນລັງກຽດບັນດາຜູ້ທີ່ມີຖານະຕ່ຳທາງສັງຄົມ. (ຜູ້ທຸກຍາກ) ບົດຮຽນນີ້ໄດ້ເຕືອນສະຕິພວກເຮົາວ່າການສະແດງການເລືອກໜ້າຄົນ ບົນພື້ນຖານຄວາມຮັ່ງມີ, ມີຄວາມໂດ່ງດັງໃນວົງສັງຄົມ, ຫຼືຄົນຈຳພວກນັ້ນຕິດພັນຢູ່ກັບຄວາມເຊື່ອໃນອົງພຣະເຢຊູຄຣິດ. ນີ້ແມ່ນເວລາສຳລັບຄຣິສຕະຈັກທີ່ຈະປະເຊີນໜ້າແລະຊຳຣະອອກທຸກໆແບບຂອງແນວຄິດທີ່ເລືອກໜ້າຄົນ.

ໃນເຊົ້າວັນອາທິດ ໃນສະຖານຈອດຣົດຂອງຄຣິສຕະຈັກທີ່ໃຫ່ຽໃນເມືອງນຶ່ງ, ມີຊາຍຄົນນຶງນຸ່ງສົ້ງຢີນທີ່ເປື້ອນເປິເຕັມໄປດ້ວຍນ້ຳມັນຢືນອີງຣົດຄັນງາມ, SUV ສີຂາວ. ລາວປັດຂີ້ຝຸ່ນດິນອອກຈາກຕາຂອງລາວ,ລູບຄຳຜົມທີ່ຫຍຸ້ງຫຍອງຂອງລາວ.ແລະກໍເອົາມືຕົບທີ່ບ່າຂອງສຸພາບສະຕຣີທ່ານນຶ່ງທີ່ກຳລັງກ້າວຂາອອກຈາກຣົດ.“ ນີ້ແມ່ນໂບດເຈົ້າບໍ່? ” ລາວຖາມ,” ດ້ວຍຄວາມຕົກໃຈ, ສຸພາບສະຕຣີຄົນນັ້ນໄດ້ເວົ້າກັບຜູ້ຕ້ອນຮັບແຂກຂອງຄຣິສຕະຈັກກ່ຽວກັບຊາຍຄົນນັ້ນ ຄືຜູ້ທີ່ເຂົາເຈົ້າໄດ້ບອກ(ໄລ່)ໃຫ້ລາວອອກຈາກທີ່ນັ້ນໄປ.

ໃນເວລາ 11:00ເຊົ້າ. ຝູງຊົນທີ່ອັ່ງອໍໃນຫ້ອງນະມັສການມີຄວາມຊົມຊື່ນຍິນດີກັບຄະນະນັກຮ້ອງໃນໂບດທີ່ນຸ່ງເຄື່ອງນັກຮ້ອງ ພ້ອມກັບຜູ້ນຳດົນຕຣີທີ່ນຸ່ງເຄື່ອງສີເຂັ້ມແລະສິດຍາພິບານທີ່ກຳລັງພາກັນຍ່າງເຂົ້າມາໃນຫ້ອງນະມັສການເພື່ອນຳພາໃນນະມັສການພຣະເຈົ້າ. ແຕ່ສິດຍາພິບານຜູ້ຊຶ່ງຫາກໍແຖໜວດໃໝ່ຢ່າງກ້ຽງເກົາໄດ້ເລີ້ມຕົ້ນຄຳເທສນາຂອງລາວວ່າ: “ ຂ້າພະເຈົ້າຢູ່ໃນສະຖານທີ່ຈອດຣົດນີ້ເຊົ້ານີ້ແລະຂ້າພະເຈົ້າກໍຖືກບອກໃຫ້ອອກຈາກທີ່ນັ້ນໄປ....”

## ສຶກສາພຣະຄັມພີ

**1. ຢ່າສະແດງຄວາມລຳອຽງ:** ຢາໂກໂບ 2:1-4

ຢາໂກໂບກ່າວຕຳໜິການສະແດງອອກໃນການເລືອກໜ້າ. ທ່ານຢາໂກໂບສະແດງໃຫ້ເຫັນວ່າມັນເປັນການບໍ່ສົມຄວນທີ່ຄຣິສຕຽນຈະເລືອກຊັ້ນວັນນະໂດຍສະເພາະຜູ້ທີ່ມີ.....ຄວາມເຊື່ອຄວາມປິ້ມປິຕິຍິນດີໃນອົງພຣະຜູ້ເປັນເຈົ້າພຣະເຢຊູຄຣິດ. ໃນພວກຊາວຢິວໃນສະຖານທີ່ນະມັສະການຂອງເຂົາ ບ່ອນນັ່ງທີ່ດີໆແມ່ນຖືກຈັດໄວ້ສຳລັບບຸກຄົນທີ່ມີຄວາມສຳຄັນທີ່ສຸດ(ລູກາ 11: 43). ທ່ານຢາໂກໂບໄດ້ເວົ້າອອກໃນລັກສະນະແນບນຽນ(ອາດຈະແມ່ນຫຍັງ)ສະຖານທີ່ນັ່ງທີ່ມີກຽດເໝາະສົມກັບຄົນຮັ່ງມີຜູ້ທີ່ເຂົ້າມາຢ້ຽມຢາມ...(ທີ່ນະມັສ ການ)ທີ່ຊຸມໜຸມ. ເມື່ອຜູ້ທີ່ເຊື່ອສະແດງການເລືອກຊັ້ນວັນນະພວກເຂົາບໍ່ໄດ້ທຳຕົວເໝືອນຢ່າງຄຣິສຕຽນໃນຄຣິສຕະຈັກ ທຸກສະຖານທີ່ແມ່ນເປັນຄວາມສເມີພາບເປັນອ້າຍນ້ອງກັນ.

ພວກເຮົາຄວນເບິ່ງໄປເຖິງການຖວາຍກຽດໃຫ້ແກ່ອົງພຣະຜູ້ເປັນເຈົ້າພຣະເຢຊູ ບໍ່ແມ່ນນຳການໃສ່ເພັດພອຍຂອງແຂກທີ່ມາຢ້ຽມຢາມ, ການນຸ່ງຖືທີ່ຈົບງາມ. ການໃສ່ເຄື່ອງປະດັບແມ່ນເປັນພຽງການບົ່ງບອກເຖິງຖານະຊົນຊັ້ນ, ມັນເປັນພຽງແຕ່ເຄື່ອງປະດັບທີ່ມີຣາຄາແພງສຳລັບມື້ນີ້. ຄຳທີ່ແປຄວາມໝາຍວ່າ ເຄື່ອງນຸ່ງທີ່ຈົບງາມ ແທ້ຈິງແລ້ວມີຄວາມໝາຍວ່າເຄື່ອງນຸ່ງທີ່ " ງົດງາມ " (ລູກາ 32:11; ພຣະນິມິດ 19:8)ເຄື່ອງນຸ່ງຂອງຄົນຮັ່ງມີແມ່ນສະອາດຮຽບຮ້ອຍ , ໃນທາງກົງກັນຂ້າມ ເຄື່ອງນຸ່ງຂອງຄົນຍາກຈົນແມ່ນຂາດສ້ອຍແລະເປິເປື້ອນ, ກໍເນື່ອງຈາກວ່າ ເປັນເຄື່ອງທີ່ບໍ່ມີມາຕຖານແລະບໍ່ເປັນທີ່ນິຍົມ. ຢາໂກໂບການຕ້ອນຮັບຂອງຜູ້ທີ່ເຊື່ອ: ຖ້າພວກທ່ານສົນໃຈນຳຄົນທີ່ແຕ່ງໂຕງົດງາມແລະກໍຈັດຫາບ່ອນນັ່ງດີໆໃຫ້ ໃນທຳນອງດຽວກັນພວກທ່ານຈັດບ່ອນທີ່ບໍ່ດີໃຫ້ກັບຄົນຍາກຈົນນັ່ງ ນັ້ນແມ່ນທ່ານໄດ້ເລືອກຊັ້ນວັນນະແລະໄດ້ຕັດສິນລ່ວງໜ້າຕາມແນວຄວາມຄິດທີ່ໂງ່ ໆ.

ໂຊກດີ, ການເລືອກຊັ້ນວັນນະແລະການຕັດສິນລ່ວງໜ້າທີ່ຢູ່ໃນໂບດແມ່ນຍັງມີຢູ່ແລະຍັງຈະຕ້ອງປະເຊີນກັບມັນຢູ່. ນຶ່ງປີຜ່ານມາ, ຂ້າພະເຈົ້າໄດ້ບອກເພື່ອນຮ່ວມງານຂອງສິດຍາພິບານຜູ້ຊຶ່ງມີຄວາມຕື່ນເຕັ້ນ ຂ້າພະເຈົ້າມີຄະນະປົກຄອງທ້ອງຖິ່ນເຂົ້າຮ່ວມນະມັສະການໃນໂບດຂອງຂ້າພະເຈົ້າ. ເພື່ອນສິດຍາພິບານຂອງຂ້າພະເຈົ້າຖາມວ່າ,"ເຈົ້າຄິງຈະມີຄວາມດີອົກດີໃຈກັບການມີໂອກາດຕ້ອນຮັບການເຂົ້າຮ່ວມ?." ຄຳເວົ້າຂອງລາວໄດ້ຢຸດຊະງັກ, ແຕ່ຂ້ອຍຍອມຮັບວ່າຂ້ອຍໄດ້ສະແດງການເລືອກຊັ້ນວັນນະ ຫຼືບໍ່ມັນກໍເປັນການຕັດສິນລ່ວງໜ້າທີ່ເປັນເປົ້າໝາຍຂອງສັງຄົມ; ຫຼືມີເຫດຜົນອື່ນອີກ, ການເລືອກໜ້າຄົນເປັນຄວາມບາບຕໍ່ສູ້ພຣະເຈົ້າແລະຍັງຕໍ່ສູ້ກັບອ້າຍເອື້ອຍນ້ອງຜູ້ຊຶ່ງໄດ້ຖືກຊົງສ້າງຂຶ້ນດ້ວຍຄວາມສເມີກັນໃນພຣະເຈົ້າແລະໄດ້ຄວາມຮັກເທົ່າທຽມກັນໃນພຣະເຈົ້າ

## 2. <u>ໃຫ້ກຽດແກ່ຜູ້ທີ່ຂັດສົນ</u>: ຢາໂກໂບ 2 : 5 - 7

ທ່ານຢາໂກໂບໄດ້ວອນຂໍໃຫ້ຄຣິສຕຽນທັງຫຼາຍຟັງເຫດຜົນຂອງເພິ່ນ, ບໍ່ໃຫ້ສະແດງການເຫັນແກ່ໜ້າກັນ, ເຕືອນສະຕິເຂົາເຈົ້າອີກວ່າພວກເຂົາຈະເປັນອ້າຍນ້ອງເທົ່າທຽມກັນ, ດັ່ງທີ່ເພິ່ນເວົ້າໃນຂໍ້ທີ 1 ນັ້ນ. ຢາໂກໂບໄດ້ບອກອີກວ່າ " ພຣະເຈົ້າໄດ້ຊົງເລືອກຄົນຍາກຈົນໃນໂລກໃຫ້ເປັນຄົນຮັ່ງມີຝ່າຍຄວາມເຊື່ອ ແລະໃຫ້ເປັນຜູ້ຮັບແຜ່ນດິນຊຶ່ງພຣະອົງຊົງສັນຍາໄວ້ວ່າຈະປະທານແກ່ຄົນທັງຫຼາຍທີ່ຮັກພຣະອົງນັ້ນມາເປັນມໍຣະດົກ. ໃນທຳນອງດຽວກັນນີ້ ພຣະເຢຊູໄດ້ກ່າວໄວ້ໃນພຣະທັມລູກາ 6:20 ວ່າທ່ານທັງຫຼາຍທີ່ຍາກຈົນກໍເປັນສຸກເພາະແຜ່ນດິນຂອງພຣະເຈົ້າເປັນຂອງພວກເຂົາ.

ສາວົກແລະຜູ້ທຳນວາຍແຕ່ກ່ອນ ລ້ວນແຕ່ເປັນຜູ້ທຸກຍາກຊຶ່ງລວມທັງທ່ານຢາໂກໂບແລະພຣະເຢຊູເອງດ້ວຍ. ອາຈານໂປໂລຂຽນໄວ້ວ່າ ຜູ້ທີ່ເຊື່ອນັ້ນມີໜ້ອຍຄົນທີ່ເປັນຜູ້ທີ່ເປັນຜູ້ຮັ່ງມີມາແຕ່ເກີດ.(1 ໂກຣິນໂທ 1:26 )ແຕ່ວ່າພວກເຂົາຮັ່ງມີໃນຄວາມເຊື່ອ. ຄຸນຄ່າຂອງຄົນແມ່ນໄດ້ວັດແທກດ້ວຍຄວາມເຊື່ອ ບໍ່ແມ່ນຊັບສົມບັດ. ຢາໂກໂບບໍ່ໄດ້ເວົ້າວ່າມັນເປັນໄປບໍ່ໄດ້ ທີ່ຄົນຮັ່ງມີຈະຮັບມໍຣະດົກຄືແຜ່ນດິນຂອງພຣະເຈົ້າບໍ່ໄດ້, ຫຼືວ່າຈະມີແຕ່ຜູ້ຍາກຈົນເທົ່ານັ້ນທີ່ຈະສາມາດຮັບມໍຣະດົກ ຄືຣາຊອານາຈັກຂອງພຣະເຈົ້າໄດ້ ຍ້ອນວ່າເຂົາເປັນຄົນຍາກຈົນກໍບໍ່ໝາຍຄວາມວ່າພວກເຂົາຖືກຮັບປະກັນທີ່ຈະໄດ້ຮັບ; ແຕ່ເພິ່ນກ່າວວ່າມັນເປັນພຣະສັນຍາວ່າຈະປະທານໃຫ້ແກ່ຄົນທັງຫຼາຍທີ່ຮັກພຣະອົງ, ຢາໂກໂບກ່າວວ່າ "ແຕ່ພວກທ່ານໄດ້ປມາດຄົນຍາກຈົນ " ແລະເພິ່ນໄດ້ເຕືອນອີກວ່າບໍ່ແມ່ນຄົນຮັ່ງມີນັ້ນຫຼືທີ່ກົດຂີ່ຂົ່ມເຫັງ

ພວກເຈົ້າ ບໍ່ແມ່ນເຂົາເຫຼົ່ານັ້ນຫຼືທີ່ລາກດຶງພວກເຈົ້າຂຶ້ນສານ. ຢາໂກໂບ 5 : 4 ໄດ້ໃຫ້ຕົວຢ່າງວ່າຄົນຮັ່ງມີໄດ້ສໍ້ໂກງຄ່າຈ້າງຂອງຄົນທີ່ກ່ຽວເຂົ້າໃນນາຂອງພວກເຈົ້າ. ນັ້ນແມ່ນອີກທາງນຶ່ງທີ່ເຂົາປມາດຄົນຍາກຈົນ ທ່ານໄດ້ບອກພວກເຂົາອີກວ່າ ແມ່ນພວກຮັ່ງມີນັ້ນແຫຼະທີ່ລາກພວກທ່ານຂຶ້ນສານ ບາງທີໝາຍເຖິງຜູ້ທີ່ເປັນລູກໜີ້ທີ່ນຳໄປຂຶ້ນສານ.ໃນສມັຍບູຮານລູກໜີ້ມັກຈະຖືກນຳໄປຂຶ້ນສານ ແລະຖືກຂັງຄຸກຫຼືບໍ່ກໍແມ່ນຖືກຂາຍໃຫ້ເປັນຂ້າທາດເພື່ອເປັນການຈ່າຍຄ່າໜີ້ (ມັດທາຍ 18:23-35) ມີແຕ່ສມັຍທຸກມື້ນີ້ ທີ່ລູກໜີ້ສາມາດທີ່ຈະປະກາດຕົນວ່າລົ້ມລະລາຍໃນພາວະການສິ້ນເນື້ອປະດາຕົວ, ຮ້າຍໄປກວ່ານັ້ນອີກ ຢາໂກໂບໄດ້ເຕືອນພວກເຂົາວ່າຄົນຮັ່ງມີເຫຼົ່ານັ້ນແຫຼະທີ່ໝິ່ນປະມາດພຣະນາມອັນປະເສີດທີ່ໃຊ້ເອີ້ນພວກເຈົ້າ. ຢາໂກໂບໄດ້ຕຳໜິພວກເຂົາທີ່ພວກເຂົາໄດ້ໃຫ້ກຽດແກ່ຄົນຮັ່ງມີ ເມື່ອຄົນຮັ່ງມີເຫຼົ່ານັ້ນກໍບໍ່ໄດ້ໃຫ້ກຽດແກ່ພຣະເຢຊູຄຣິດເລີຍ.

ພຽງບໍ່ເທົ່າໃດທົດສະວັດຫຼັງຈາກຢາໂກໂບໄດ້ຂຽນໜັງສືສະບັບນີ້, ພູເຂົາໄຟ (VESUVIUS) ທີ່ຢູ່ທາງພາກໃຕ້ຂອງປະເທດອີຕາລີໄດ້ລະເບີດແລະລະລາຍແຫ່ທາດທີ່ແຫຼວແລະມີຄວາມຮ້ອນເໝືອນໄຟອອກມາຈາກພູເຂົາໄຟໄວທີ່ສຸດຈົນຖ້ວມເມືອງ ( POMPE II )ແລະປົກຄຸມຫຼາຍໆຄົນທີ່ກຳລັງໜີ. ຫຼາຍສັຕວັດຕໍ່ມາມີຜູ້ຄົນໄດ້ຄົ້ນພົບຊາກສົບຂອງຊາວເມືອງ ( POMPE II ) ຕິກັນກັບແຊ່ຢູ່ໃນນ້ຳແຂງ. ໜ້າເສົ້າໃຈຫຼາຍທີ່ໄດ້ເຫັນຫຼາຍຄົນຍັງມີເງິນຫຼຽນແລະເຄື່ອງເພັດປະດັບຕົວຕິດໂຕຢູ່. ມັນເປັນຄວາມໂງ່ເຂົາທີ່ໄວ້ວາງໃຈໃນຄວາມຮັ່ງມີທີ່ມັນສາມາດເອົາໜີໄປໄດ້. ມັນມີຄຸນຄ່າຫຼາຍປານໃດ? ທີ່ເປັນຄົນຮັ່ງມີໃນຄວາມເຊື່ອ ທີ່ຈະຮັ່ງມີຕລອດໄປເປັນນິດ.

## 3. <u>ຊັຍຊະນະດ້ວຍຄວາມເມດຕາ</u>: ຢາໂກໂບ 2:8-13

ທ່ານຢາໂກໂບໄດ້ຍົກເອົາຂໍ້ພຣະຄັມພີເດີມຂຶ້ນມາເພື່ອຈະພິສູດໃຫ້ເຫັນໃນການບໍ່ເລືອກໜ້າຄົນ. ເພິ່ນໄດ້ກ່າວໃນພຣະທັມລະບຽບພວກເລວີ 19:18, ຈົ່ງຮັກເພື່ອນມະນຸດເໝືອນຮັກຕົນເອງ, ແລະພຣະເຢຊູຄຣິດເອງກໍໄດ້ຍົກມາກ່າວໃນ(ມັດທາຍ 22:36-39) ກົດບັນຍັດອັນສຳຄັນບໍ່ແມ່ນຢູ່ໃນການເຮັດພິທີຕັດຫຼືວ່າການຮັກສາຂໍ້ພຣະບັນຍັດຂອງວັນສິນຊະບາໂຕຫຼືພິທີການຖວາຍຕ່າງໆຊຶ່ງເປັນບັນຍັດຂອງຊາວຢິວທີ່ໄດ້ພາກັນເນັ້ນໜັກໃສ່. ພຣະບັນຍັດນັ້ນແມ່ນກ່າວເຖິງຄວາມຮັກທີ່ມີຕໍ່ຜູ້ອື່ນ. ສລຸບແລ້ວທ່ານຢາໂກໂບໄດ້ເວົ້າວ່າ,“ຖ້າເຈົ້າທັງຫຼາຍເລືອກໜ້າຄົນພວກເຈົ້າກໍເຮັດຜິດແລະພຣະບັນຍັດຕັດສິນພວກເຈົ້າວ່າເປັນຄົນລ່ວງລະເມີດ.” ຄຳວ່າລວງລະເມີດກໍຄືບາບທີ່ໝາຍເຖິງການກ້າວກາຍຂອບເຂດ. ດັ່ງນັ້ນທ່ານຢາໂກໂບຈຶ່ງເວົ້າວ່າຖ້າທ່ານເປັນຄົນເລືອກໜ້າຄົນທ່ານໄດ້ກ້າວກາຍໄປໄກໝົດແລ້ວ ພຣະທັມຢາໂກໂບ 2:12-13 ເມື່ອມາສລຸບເບິ່ງແລ້ວເພິ່ນໄດ້ເວົ້າເຖິງການເລືອກໜ້າຄົນ. ການດຳລົງຊີວິດຂອງເຮົາສົມຄວນປະຕິບັດໃຫ້ສົມກັບຄຳເວົ້າຂອງເຮົາ. ເໝືອນກັບອັບຣາຮາມ, ຄວາມເຊື່ອກໍຮວມຢູ່ດ້ວຍກັບການປະຕິບັດ (ຂໍ້ 22) ຖ້າເຮົາຫາກເວົ້າວ່າພວກເຮົາເປັນພີ່ນ້ອງກັນໃນອົງພຣະຄຣິດ, ພວກເຮົາກໍຄວນທີ່ຈະປະຕິບັດຕໍ່ເຊິ່ງກັນແລະກັນໃຫ້ມີຄວາມສເມີພາບກັນ. ເຈົ້າທັງຫຼາຍຈົ່ງເວົ້າແລະເຮັດເໝືອນຢ່າງຄົນທີ່ຈວນຈະໄດ້ຮັບການພິພາກສາດ້ວຍກົດທີ່ໃຫ້ມີເສຣີພາບ. ພວກເຮົາທຸກຄົນທີ່ຈວນຈະຖືກພິພາກສາດ້ວຍກົດທີ່ໃຫ້ເສຣີພາບ, ຄຣິສຕຽນເຮົາທັງຫຼາຍຄວນຈະເຫັນກົດບັນຍັດຂອງພຣະເຈົ້ານັ້ນເປັນເໝືອນເສັ້ນແບ່ງເຂດເພື່ອຮັກສາຄວາມມີເສຣີພາບຂອງຕົນເອງ, ເໝືອນກັນກັບປາທີ່ລອຍຢູ່ໃນນ້ຳດ້ວຍເສຣີພາບແລະຢູ່ນານເທົ່າທີ່ນານໄດ້, ຖ້າຫາກວ່າຢູ່ໃນນ້ຳ. ພຣະທັມຢາໂກໂບໄດ້ຊີ້ໃຫ້ເຮົາເຫັນວ່າພວກເຮົາທຸທຄົນໄດ້ເຮັດຜິດຕໍ່ພຣະບັນຍັດຖ້າວ່າພວກເຮົາບໍ່ເຊື່ອຟັງພຣະບັນຍັດແມ່ນແຕ່ຂໍ້ດຽວ. (ຂໍ້ 13) ເພິ່ນໄດ້ບັນຍາຍເຖິງຄວາມສຳພັນລະຫວ່າງຂໍ້ບັນຍັດກັບການພິພາກສາແລະຄວາມເມດຕາ. ຂໍ້ບັນຍັດນັ້ນໄດ້ມາກ່ອນເພື່ອໃຫ້ເຮົາຮູ້ວ່າແມ່ນອັນໃດຖືກຕ້ອງ ພຣະເຈົ້າກໍຈະພິພາກສາຖ້າເຮົາລ່ວງຂໍ້ພຣະບັນຍັດເຊິ່ງເຮັດໃຫ້ເຮົາທຸກຄົນຕົກຢູ່ໃນຄວາມລຳບາກ, ເພາະວ່າໃນການພິພາກສາຂອງພຣະເຈົ້າຈະບໍ່ຊົງສະແດງຄວາມເມດຕາ. ພວກເຮົາທຸກຄົນຕ້ອງການຄວາມເມດຕາຂອງພຣະເຢຊູຄຣິດຊຶ່ງພຣະອົງໄດ້ສະລະພຣະອົງເອງເພື່ອໄຖ່ຄວາມຜິດບາບຂອງເຮົາທຸກຄົນ. ດັ່ງນັ້ນ

ແລ້ວໃນວັນພິພາກສາໄມ້ກາງເຂນຂອງພຣະເຢຊູຄຣິດຈະໃຫ້ຄວາມຊັຍຊະນະແກ່ພວກເຮົາແລະຄວາມເມດຕາຍ່ອມຊະນະເໜືອການພິພາກສາ.

## ບົດຮຽນແຫ່ງຊີວິດ:

ດ້ວຍເຫດໃດການເລືອກໜ້າຄົນນັ້ນເປັນສິ່ງທີ່ຜິດຢູ່ໃນຄຣິສຕະຈັກ? ໃນພຣະເຢຊູຄຣິດທຸກຄົນແມ່ນມີຄວາມສເມີພາບ, ດັ່ງນັ້ນບໍ່ຄວນມີການແບ່ງຊັ້ນວັນນະຫຼືເລືອກໜ້າຄົນໃນຄຣິສຕະຈັກ. ສ່ວນຫຼາຍແລ້ວແມ່ນຄົນຍາກຈົນມີຄວາມເຊື່ອຫຼາຍກ່ວາຄົນຮັ່ງມີ, ແລະຄວນຈະໄດ້ຮັບກຽດ. ເຮົາສົມຄວນຮັກເພື່ອນບ້ານເໝືອນຮັກຕົນເອງ.

ມີວິທີໃດຈະສາມາດເຮັດໃຫ້ເຮົາຫຼີກລ້ຽງການເລືອກໜ້າຄົນແລະການຕັດສິນຜູ້ອື່ນໃນຄຣິສຕະຈັກ?

- ❖ ຖ້າຄຣິສຕະຈັກຂອງທ່ານຫາກມີນະໂຍບາຍ,"ອັດປະຕູໂບດ,"ເພື່ອບໍ່ໃຫ້ຄົນກຸ່ມໃດກຸ່ມນຶ່ງມາຮ່ວມນະມັສະການຈົ່ງເລີກນະໂຍບາຍນັ້ນເສັຽ.
- ❖ ອາສາສມັກເປັນຜູ້ຕ້ອນຮັບແຂກຢູ່ໃນຄຣິສຕະຈັກ ປະຕິບັດຕໍ່ຜູ້ມາຢ້ຽມຢາມນັ້ນຢ່າງສເມີພາບບໍ່ວ່າເຂົາຈະນຸ່ງຫົ່ມແບບໃດແລະເປັນຄົນປະເພດໃດກໍໃຫ້ຕ້ອນຮັບແລະໃຫ້ກຽດເຂົາທັງນັ້ນ..
- ❖ ຈົ່ງປ່ຽນແປງແນວຄິດແບບແບ່ງແຍກຊັ້ນຄົນໃນຄຣິສຈັກແລະຈົ່ງພະຍາຍາມຊອກຫາຜູ້ທີ່ຖືກປະລະນັ້ນໃຫ້ມີໂອກາດໄດ້ຮັບໃຊ້ຮ່ວມກັນ.
- ❖ ຈະຍຸດຕິໃນການເລືອກໜ້າຄົນແລະການຕັດສິນຜູ້ອື່ນນັ້ນມັນກໍມີຄວາມລຳບາກແລະຍາກ. ແຕ່ຈົ່ງເຂົ້າໃຈຄວາມຕ້ອງການຂອງຄົນອື່ນແລະຈົ່ງສະແຫວງຫາຄວາມຮັກຕໍ່ກັນແລະກັນໃຫ້ໃຊ້ເວລາອະທິຖານຂໍການຊົງນຳຂອງພຣະເຈົ້າໃນການທີ່ຈະຕັດສິນໃຈເຮັດອັນໃດອັນນຶ່ງ. ເຖິງຢ່າງໃດກໍຕາມຢ່າໃຫ້ຄວາມຢ້ານຂອງຝ່າຍຕົງກັນຂ້າມມາທຳລາຍຄວາມກ້າຫານໃນການທຳຄວາມດີຂອງທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.**